ດ່ວນທີ່ສຸດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ແຜນການ ແລະ ການລົງທຶນ

ເລກທີ.0625/ກຜທ
ນະຄອນຫຼວງວຽງຈັນ,ວັນທີ .24.ເມ.ສ.2020

# ແຈ້ງການເພີ່ມເຕີມ

**ເຖິງ:** ຫົວໜ້າຫ້ອງການ, ຫົວໜ້າກົມ, ຫົວໜ້າຫ້ອງການສູນສະຖິຕິແຫ່ງຊາດ, ຫົວໜ້າຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ, ຫົວໜ້າຫ້ອງການຄະນະກໍາມະການຮ່ວມມືລາວ-ຫວຽດນາມ, ຫົວໜ້າຫ້ອງການຄະນະກໍາມະການຮ່ວມມືລາວ-ຈີນ ແລະ ຫົວໜ້າສູນຄົ້ນຄວ້ານະໂຍບາຍການພັດທະນາ.

**ເລື່ອງ:** ການສືບຕໍ່ຈັດຕັ້ງປະຕິບັດຄໍາສັ່ງຂອງ ທ່ານນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີມາດຕະການ ສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19 ຢູ່ ກະຊວງ ແຜນການ ແລະ ການລົງທຶນ.

- ອີງຕາມ ຂໍ້ຕົກລົງຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງແຜນການ ແລະການລົງທຶນ ສະບັບ ເລກທີ 201/ນຍ ລົງວັນທີ 30 ມິຖຸນາ 2017;
- ອີງຕາມ ຄໍາສັ່ງຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີມາດຕະການ ສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19 ສະບັບເລກທີ 06/ນຍ ລົງວັນທີ 29 ມີນາ 2020 ແລະ ແຈ້ງການສະບັບເລກທີ 481/ຫສນຍ ລົງວັນທີ 15 ເມສາ 2020 ເລື່ອງການຕໍ່ເວລາ ແລະ ການແນະນໍາເພີ່ມເຕີມກ່ຽວກັບການຈັດຕັ້ງປະຕິບັດ ຄໍາສັ່ງເລກທີ 06/ນຍ.
- ອີງຕາມ ແຈ້ງການຂອງ ກະຊວງແຜນການ ແລະການລົງທຶນ ເລກທີ 596/ກຜທ. ລົງວັນທີ 20 ເມສາ 2020.

ນັບແຕ່ວັນທີ 20 ເມສາ 2020 ມາຮອດປະຈຸບັນ, ກະຊວງແຜນການ ແລະການລົງທຶນ ໄດ້ເອົາໃຈໃສ່ສືບຕໍ່ປະຕິບັດ ຕາມຄໍາສັ່ງຂອງນາຍົກລັດຖະມົນຕີ ເລກທີ 06/ນຍ ແລະ ມາດຕະມາດຕະການອື່ນໆຂອງຄະນະສະເພາະກິດລະດັບຊາດ ຢ່າງເຂັ້ມງວດ ແລະ ຍ້ອນ ກະຊວງແຜນການ ແລະການລົງທຶນ ມີຄວາມຈໍາເປັນຕ້ອງປະຕິບັດໜ້າທີ່ວຽກງານຈຸດສຸມຂອງຕົນ ໃຫ້ທັນກັບຄວາມຮຽກຮ້ອງຕ້ອງການຂອງພັກ ແລະລັດຖະບານ ໃນປະຈຸບັນ ແລະ ໃນສະເພາະໜ້າ ປະກອບກັບ ສະຖານທີ່ເຮັດວຽກພາຍໃນ ກະຊວງ ສ່ວນຫລາຍ ກໍສາມາດຮັກສາໄດ້ຕາມມາດຕະຖານທີ່ຄະນະສະເພາະກິດກໍານົດໄວ້. **ສະນັ້ນ, ຈຶ່ງອອກແຈ້ງການເພີ່ມເຕີມມາຍັງທຸກພາກສ່ວນພາຍໃນກະຊວງ ໃຫ້ປັບປຸງຕາຕະລາງ ການມາປະຕິບັດວຽກງານຢູ່ຫ້ອງການ ຂອງຕົນ ນັບແຕ່ວັນທີ 27 ເມສາ - 03 ພຶດສະພາ 2020 ດັ່ງນີ້:**

1. **ຜູ້ທີ່ມາປະຈໍາການປົກກະຕິ ຢູ່ຫ້ອງການຂອງຕົນ, ມີ:**
   - ບັນດາທ່ານຮອງລັດຖະມົນຕີ ແລະທຽບເທົ່າຮອງລັດຖະມົນຕີ;
   - ບັນດາທ່ານຮອງຫົວໜ້າສູນສະຖິຕິແຫ່ງຊາດ, ບັນດາທ່ານຫົວໜ້າກົມ, ຫ້ອງການ, ສູນ ພ້ອມດ້ວຍຄະນະທຸກທ່ານ;
   - ບັນດາທ່ານຫົວໜ້າພະແນກ ແລະ ຮອງຫົວໜ້າພະແນກ ທຸກທ່ານ;
2. **ຜູ້ທີ່ຜັດປ່ຽນກັນມາເຮັດວຽກປະຈໍາການ ຢູ່ຫ້ອງການ, ມີ:**



Scanned by TapScanner

- ພະນັກງານວິຊາການ  ຂອງແຕ່ລະພະແນກ ຈໍານວນໃດໜຶ່ງ ໂດຍໃຫ້ຫົວໜ້າກົມ, ຫ້ອງການ ແລະ ສູນ ຄົ້ນຄວ້າຈັດແບ່ງ ຜູ້ມາປະຈໍາການ ແລະ ຜູ້ເຮັດວຽກຢູ່ເຮືອນ ຕາມຄວາມເໝາະສົມ ເພື່ອຮັບປະກັນໃຫ້ວຽກ ສໍາເລັດຕາມກໍານົດເວລາ.
- ພະນັກງານບໍລິການຮັບໃຊ້ ໃຫ້ມາປະຕິບັດວຽກງານຕາມໜ້າວຽກຕົວຈິງໃນແຕ່ລະມື້.

ໝາຍເຫດ: ແຈ້ງການສະບັບນີ້ ປ່ຽນແທນເນື້ອໃນຂີດໜ້າທີ່ 2 ໃນມາດຕາ 2 ຂອງ ແຈ້ງການ ເລກທີ 596/ກຜທ. ລົງວັນທີ 20 ເມສາ 2020.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຮອງນາຍົກລັດຖະມົນຕີ,

ລັດຖະມົນຕີ

ສອນໄຊ ສີພັນດອນ



Scanned by TapScanner